ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

****

VIENTIANE CENTER
ວຽງຈັນເຊັ້ນເຕີ

ເລກທີ: 021 / ວຈຊຕ

ນະຄອນຫຼວງວຽງຈັນ, ວັນທີ: 29 APR 2025

ຮຽນ: ທ່ານ ຫົວໜ້າ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ທີ່ນັບຖື.

ທ່ານ ຜູ້ອຳນວຍການໃຫຍ່ ຕະຫຼາດຫຼັກຊັບລາວ ທີ່ນັບຖື.

ບັນດາຜູ້ຖືຮຸ້ນຂອງບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ ທີ່ນັບຖື.

ເລື່ອງ: ແຈ້ງມະຕິກອງປະຊຸມສາມັນຜູ້ຖືຮຸ້ນ ຂອງ ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ ປະຈຳປີ 2024

- ອີງຕາມ ຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບເລກທີ 27/ຄຄຊ, ລົງວັນທີ 29 ມີນາ 2022..

- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ສະບັບເລກທີ 008/ຕລຊ, ລົງ ວັນທີ 27 ກັນຍາ 2018.

ບໍລິສັດ ວຽງຈັນເຊັ້ນເຕີລາວມະຫາຊົນ (ວຈຊຕ) ໄດ້ຈັດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2024 ໃນ ວັນທີ 29 ເມສາ 2025 ໂດຍມີຜູ້ຖືຮຸ້ນເຂົ້າຮ່ວມປະຊຸມທັງໝົດ 38 ທ່ານ, ແບ່ງເປັນຜູ້ຖືຮຸ້ນທີ່ເຂົ້າມາດ້ວຍຕົນ ເອງຈຳນວນ 35 ທ່ານ ແລະ ຜູ້ຖືຮຸ້ນທີ່ມອບສິດໃຫ້ຜູ້ຕາງໜ້າເຂົ້າຮ່ວມປະຊຸມແທ່ນຈຳນວນ 3 ທ່ານ ເຊິ່ງຖືຮຸ້ນລວມທັງໝົດ 144.196.500 ຮຸ້ນ ຫຼື ເທົ່າກັບ 98 ສ່ວນຮ້ອຍຂອງຈຳນວນຮຸ້ນທັງໝົດຂອງ ວຈຊຕ, ໂດຍກອງ ປະຊຸມໄດ້ມີມະຕິດັ່ງນີ້:

<u>**ວາລະທີ 01: ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2023.**</u>

ກອງປະຊຸມໄດ້ລົງມະຕິດ້ວຍສຽງເປັນເອກະພາບ ຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ແລະ ມີສິດລົງ ຄະແນນສຽງດັ່ງນີ້:

- ເຫັນດີ 144.196.500 ສຽງ (ຮຸ້ນ), ເທົ່າກັບ 100 ສ່ວນຮ້ອຍຂອງຈຳນວນຮຸ້ນທັງໝົດທີ່ເຂົ້າຮ່ວມ ປະຊຸມແລະ ມີສິດລົງຄະແນນສຽງ

- ບໍ່ເຫັນດີ 0 ສຽງ (ຮຸ້ນ), ເທົ່າກັບ 0 ສ່ວນຮ້ອຍຂອງຈຳນວນຮຸ້ນທັງໝົດທີ່ເຂົ້າຮ່ວມປະຊຸມ ແລະ ມີສິດລົງຄະແນນສຽງ

ມະຕິ: ເຫັນດີຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2023.

<u>ວາລະທີ 02: ພິຈາລະນາ ແລະ ຮັບຮອງບົດລາຍງານການເງິນປະຈຳປີ 2024 ຂອງບໍລິສັດ ວຈຊຕ.</u>

ກອງປະຊຸມໄດ້ລົງມະຕິດ້ວຍສຽງເປັນເອກະພາບ ຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ແລະ ມີສິດລົງຄະແນນສຽງດັ່ງນີ້:

- ເຫັນດີ 144.196.500 ສຽງ (ຮຸ້ນ), ເທົ່າກັບ 100 ສ່ວນຮ້ອຍຂອງຈຳນວນຮຸ້ນທັງໝົດທີ່ເຂົ້າຮ່ວມປະຊຸມແລະ ມີສິດລົງຄະແນນສຽງ

- ບໍ່ເຫັນດີ 0 ສຽງ (ຮຸ້ນ), ເທົ່າກັບ 0 ສ່ວນຮ້ອຍຂອງຈຳນວນຮຸ້ນທັງໝົດທີ່ເຂົ້າຮ່ວມປະຊຸມ ແລະ ມີສິດລົງຄະແນນສຽງ

ມະຕິ: ເຫັນດີຮັບຮອງດລາຍງານການເງິນປະຈຳປີ 2024 ຂອງບໍລິສັດ ວຈຊຕ.

<u>ວາລະທີ 03: ພິຈາລະນາ ແລະ ຮັບຮອງ ບົດລາຍງານຜົນການດຳເນີນທຸລະກິດປະຈຳປີ 2024 ແລະ ແຜນການດຳເນີນທຸລະກິດ 2025 ຂອງ ວຈຊຕ</u>

ກອງປະຊຸມໄດ້ລົງມະຕິດ້ວຍສຽງເປັນເອກະພາບ ຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ແລະ ມີສິດລົງຄະແນນສຽງດັ່ງນີ້:

- ເຫັນດີ 144.196.500 ສຽງ (ຮຸ້ນ), ເທົ່າກັບ 100 ສ່ວນຮ້ອຍຂອງຈຳນວນຮຸ້ນທັງໝົດທີ່ເຂົ້າຮ່ວມປະຊຸມແລະ ມີສິດລົງຄະແນນສຽງ

- ບໍ່ເຫັນດີ 0 ສຽງ (ຮຸ້ນ), ເທົ່າກັບ 0 ສ່ວນຮ້ອຍຂອງຈຳນວນຮຸ້ນທັງໝົດທີ່ເຂົ້າຮ່ວມປະຊຸມ ແລະ ມີສິດລົງຄະແນນສຽງ

ມະຕິ: ເຫັນດີຮັບຮອງບົດລາຍງານຜົນການດຳເນີນທຸລະກິດປະຈຳປີ 2024 ແລະ ແຜນການດຳເນີນທຸລະກິດ 2025 ຂອງ ວຈຊຕ.

<u>ວາລະທີ 04: ພິຈາລະນາ ແລະ ຮັບຮອງແຜນການຈັດສັນຜົນກຳໄລສຸດທິ ປະຈຳປີ 2024 ຂອງບໍລິສັດ.</u>

ກອງປະຊຸມໄດ້ລົງມະຕິດ້ວຍສຽງເປັນເອກະພາບ ຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ແລະ ມີສິດລົງຄະແນນສຽງດັ່ງນີ້:

- ເຫັນດີ 144.196.500 ສຽງ (ຮຸ້ນ), ເທົ່າກັບ 100 ສ່ວນຮ້ອຍຂອງຈຳນວນຮຸ້ນທັງໝົດທີ່ເຂົ້າຮ່ວມປະຊຸມແລະ ມີສິດລົງຄະແນນສຽງ

- ບໍ່ເຫັນດີ 0 ສຽງ (ຮຸ້ນ), ເທົ່າກັບ 0 ສ່ວນຮ້ອຍຂອງຈຳນວນຮຸ້ນທັງໝົດທີ່ເຂົ້າຮ່ວມປະຊຸມ ແລະ ມີສິດລົງຄະແນນສຽງ

ມະຕິ: ເຫັນດີຮັບຮອງແຜນການຈັດສັນຜົນກຳໄລສຸດທິ ປະຈຳປີ 2024 ຂອງບໍລິສັດ ດັ່ງນີ້:

1. ແບ່ງເຂົ້າຄັງສະສົມຕາມລະບຽບການ: 10%;

2. ຈ່າຍເງິນປັນຜົນ: 5 ກີບ/ຮຸ້ນ;

3. ແບ່ງສ່ວນທີ່ເຫຼືອເຂົ້າຄັງຂະຫຍາຍທຸລະກິດ;

4. ກຳນົດເອົາທີ 02/05/2025 ເປັນມື້ປິດປຶ້ມທະບຽນຜູ້ຖືຮຸ້ນເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການຮັບເງິນປັນຜົນ, ມື້ຈ່າຍເງິນປັນຜົນແມ່ນ 28/05/2025;

5. ມອບໃຫ້ຜູ້ອຳນວຍການໃຫຍ່ ເປັນຜູ້ລົງນາມເອກະສານຕ່າງໆທີ່ກ່ຽວກັບການຈ່າຍເງິນປັນຜົນ.

<u>ວາລະທີ 05: ພິຈາລະນາ ແລະ ຮັບຮອງການວ່າຈ້າງບໍລິສັດກວດສອບບັນຊີອິດສະຫຼະ ຂອງບໍລິສັດ ວຈຊຕ.</u>

ກອງປະຊຸມໄດ້ລົງມະຕິດ້ວຍສຽງເປັນເອກະພາບ ຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ແລະ ມີສິດລົງຄະແນນສຽງ ດັ່ງນີ້:

- ເຫັນດີ 144.196.500 ສຽງ (ຮຸ້ນ), ເທົ່າກັບ 100 ສ່ວນຮ້ອຍຂອງຈຳນວນຮຸ້ນທັງໝົດທີ່ເຂົ້າຮ່ວມປະຊຸມ ແລະ ມີສິດລົງຄະແນນສຽງ

- ບໍ່ເຫັນດີ 0 ສຽງ (ຮຸ້ນ), ເທົ່າກັບ 0 ສ່ວນຮ້ອຍຂອງຈຳນວນຮຸ້ນທັງໝົດທີ່ເຂົ້າຮ່ວມປະຊຸມ ແລະ ມີສິດລົງຄະແນນສຽງ

ມະຕິ: ເຫັນດີຮັບຮອງວ່າຈ້າງ ບໍລິສັດ ພຣາຍສວໍເຕີ້ ເຮົ້າສກຸບເປີສ (ລາວ) ຈຳກັດ ຜູ້ດຽວ (Price Water HouseCoopers (Laos) Sole Co., Ltd) ເປັນບໍລິສັດກວດສອບບັນຊີອິດສະຫຼະຂອງ ບໍລິສັດ.ປີບັນຊີສຳລັບການກວດສອບແມ່ນປີ 2025 ແລະ ຄ່າບໍລິການກວດສອບແມ່ນ 28,500 ໂດລາ.

ຮຽນມາຍັງທ່ານເພື່ອຊາບ ແລະ ໃຊ້ຕ້ານລາຍງານ.

ດ້ວຍຄວາມເຄົາລົບນັບຖືຢ່າງສູງ

ປະທານກອງປະຊຸມ

ບໍລິສັດ ວຽງຈັນເຊັ້ນເຕີ ມະຫາຊົນ ວຽງຈັນ Vientiane Center Lao Public Company

Wang Wei Kun